PRUDENTIAL
ພຣູເດັນໂຊລ ປະກັນໄພຊີວິດ

Listening. Understanding. Delivering.

ຜະລິດຕະພັນ ພຣູບີສິເນດສ์

ປົກປ້ອງ ແລະ ຄຸ້ມຄອງພະນັກງານ
ຂອງທ່ານດ້ວຍຜະລິດຕະພັນ
ປະກັນໄພຈາກພຣູເດັນໂຊລ์

Life and Savings Insurance

ເປັນຫຍັງປະກັນໄພກຸ່ມນັ້ນມີຄວາມສຳຄັນສຳລັບບໍລິສັດຂອງທ່ານ?

ພະນັກງານຖືວ່າເປັນຊັບພະຍາກອນທີ່ສຳຄັນທີ່ສຸດຂອງອົງການ.ໃນທຸລະກິດທັນສະໄໝປະຈຸບັນ,ການປະກັນໄພກຸ່ມຈະຊ່ວຍເພີ່ມປະສິດຕິພາບ ແລະ ຮັກສາຂອງພະນັກງານໃຫ້ຢູ່ໃນອົງກອນ. ການມອບຄວາມປົກປ້ອງ ແລະ ຄຸ້ມຄອງເປັນສ່ວນໜຶ່ງຂອງສະຫວັດດີການໃຫ້ພະນັກງານສາມາດນຳພາໃຫ້ພະນັກງານມີຄວາມສຸກ ແລະ ສຸຂະພາບດີຂຶ້ນ ເຊິ່ງຈະສົ່ງຜົນສະທ້ອນໃຫ້ພະນັກງານເຮັດວຽກແບບມີປະສິດທິຜົນຂຶ້ນ.

ພຣູບີສີເນດສ ເປັນຜະລິດຕະພັນທີ່ໃຫ້ຄວາມປົກປ້ອງ ແລະ ຄຸ້ມຄອງ ເຊິ່ງຄຸ້ມຄອງກໍລະນີການເສຍຊີວິດ ແລະ ພິການ.

ຜະລິດຕະພັນນີ້ເໝາະສົມກັບບໍລິສັດຂອງທ່ານບໍ?

ເໝາະສົມ

- ຖ້າຫາກວ່າບໍລິສັດຂອງທ່ານແມ່ນມີຂະໜາດນ້ອຍເຖິງຂະໜາດກາງ ຫຼື ຂະໜາດໃຫຍ່ທີ່ມີພະນັກງານຢ່າງນ້ອຍ 5 ຄົນ.
- ຖ້າຫາກວ່າບໍລິສັດຂອງທ່ານຕ້ອງການມອບການປະກັນໄພເຊິ່ງເປັນການສະຫວັດດີການເພື່ອດຶງດູດ ແລະ ຮັກສາພະນັກງານ.

ບໍ່ເໝາະສົມ

- ຖ້າຫາກວ່າບໍລິສັດຂອງທ່ານຊອກຫາຜະລິດຕະພັນການປະກັນໄພແບບບຸກຄົນ.
- ຖ້າຫາກວ່າບໍລິສັດຂອງທ່ານຊອກຫາພະລິດຕະພັນປະກັນໄພທີ່ນອກເໜືອຈາກສະຫວັດດີການຂອງພະນັກງານເຊັ່ນ: ປະກັນໄພຄວາມຜິດທາງວິຊາຊີບ ແລະ ປະກັນໄພທາງດ້ານຊັບສິນ.

ຜົນປະ�โຫຍດທີ່ຈະໄດ້ຮັບເປັນເງິນກີບ:

ຕາຕະລາງຂ້າງລຸ່ມນີ້ແມ່ນສະແດງເຖິງວົງເງິນຄຸ້ມຄອງຂອງແຕ່ລະແພັກເກັດ. ປະກັນໄພຊີວິດແບບກຸ່ມແມ່ນເປັນສັນຍາການປະກັນໄພແບບພື້ນຖານ ເຊິ່ງຈະມີ ຜົນປະໂຫຍດການຄຸ້ມຄອງແບບປະກັນໄພ
ກຸ່ມຈາກການເສຍຊີວິດຈາກອຸປະຕິເຫດ ແລະ ພິການ.

ຜົນປະໂຫຍດການຄຸ້ມຄອງແບບປະກັນໄພກຸ່ມຈາກການເຂົ້າໂຮງໝໍເນື່ອງຈາກອຸປະຕິເຫດ.

	ປະກັນໄພຊີວິດແບບກຸ່ມ (1)	ຜົນປະໂຫຍດການຄຸ້ມຄອງແບບ ປະກັນໄພກຸ່ມຈາກການເສຍຊີວິດ ຈາກອຸປະຕິເຫດ ແລະ ພິການ (1)	ຜົນປະໂຫຍດການຄຸ້ມຄອງແບບ ປະກັນໄພກຸ່ມຈາກການເຂົ້າໂຮງໝໍ ເນື່ອງຈາກອຸປະຕິເຫດ (1)
ແຜນ 1	50.000.000ກີບ	50.000.000ກີບ	50.000ກີບ
ແຜນ 2	100.000.000ກີບ	100.000.000ກີບ	100.000ກີບ
ແຜນ 3	150.000.000ກີບ	150.000.000ກີບ	150.000ກີບ
ແຜນ 4	200.000.000ກີບ	200.000.000ກີບ	200.000ກີບ
ແຜນ 5	ການກຳນົດເອົາ	ການກຳນົດເອົາ	ການກຳນົດເອົາ

1) ປະກັນໄພຊີວິດແບບກຸ່ມ ແມ່ນເປັນຂໍ້ບັງຄັບ ແລະ ສ່ວນຂອງຜົນປະໂຫຍດການຄຸ້ມຄອງແບບປະກັນໄພກຸ່ມຈາກການເສຍຊີວິດຈາກອຸປະຕິເຫດ ແລະ ພິການ. ຜົນປະໂຫຍດການຄຸ້ມຄອງແບບປະກັນໄພກຸ່ມຈາກການເຂົ້າໂຮງໝໍ ເນື່ອງຈາກອຸປະຕິເຫດ ແມ່ນເປັນຜົນປະໂຫຍດເພີ່ມຕື່ມ ເຊິ່ງຈະຖືກຕັດສິນກ່ອນການອອກສັນຍາການປະກັນໄພ.

2) ການຄຸ້ມຄອງແມ່ນສາມາດຖືກກຳນົດໂດຍເງື່ອນໄຂມາດຕະຖານຂອງບໍລິສັດ.

ເງື່ອນໄຂ ແລະ ຜົນປະໂຫຍດຂອງ ຜະລິດຕະພັນ ພຣູບິສິເນດສ์

ຄຸນລັກສະນະ	ເງື່ອນໄຂ
ເງື່ອນໄຂຂອງພະນັກງານ	ພະນັກງານປະຈຳເທົ່ານັ້ນ ແລະ ເປັນຜູ້ທີ່ຍັງເຮັດວຽກ. ພະນັກງານທີ່ຍັງເຮັດວຽກ ເຊິ່ງໝາຍເຖິງພະນັກງານທີ່ຍັງປະຕິບັດໜ້າທີ່ປົກກະຕິ,ບໍ່ມີການພິການທາງຮ່າງກາຍ,ບໍ່ຂາດການເນື່ອງຈາກການເຈັບປ່ວຍ ຫຼາຍກວ່າ 5 ວັນ ຫຼື ຫຼາຍກວ່າຕິດຕໍ່ກັນ ໃນປີທີ່ຜ່ານມາກ່ອນການເຮັດສັນຍາການປະກັນໄພ. ການພິການທາງຮ່າງກາຍໝາຍເຖິງການເສຍອົງຄະໃນຮ່າງກາຍ ຫຼື ເສຍການມອງເຫັນ, ຫຼື ເສຍການໄດ້ຍິນ ທີ່ຕາ ແລະ ຫູ ຕາມລຳດັບ.
ຈຳນວນພະນັກງານຂັ້ນຕ່ຳ	5 ຄົນ, ເຖິງຢ່າງໃດກໍ່ຕາມຖ້າຈຳນວນພະນັກງານຫາກໜ້ອຍກວ່າ 10 ຄົນ, ພວກເຂົາຈະໄດ້ຮັບການຄຸ້ມຄອງຫຼັງຈາກໄດ້ຮັບຂັ້ນຕອນການພິຈາລະນາປະກັນໄພຂອງບໍລິສັດ. ການຄຸ້ມຄອງນີ້ຍັງລວມໄປເຖິງຄູ່ສົມລົດຂອງພະນັກງານອີກດ້ວຍ.
ອາຍຸຂັ້ນຕ່ຳ ແລະ ສູງສຸດສຳລັບຜະລິດຕະພັນ	ສະມາຊິກກຸ່ມ: ມີອາຍຸລະຫວ່າງ 18-65 ປີ ຫຼື ບຸກຄົນທີ່ມີອາຍຸກະສຽນ. ສຳລັບຄົນທີ່ມີອາຍຸເກີນ 65 ປີ ຫຼື ມີອາຍຸກະສຽນຈະສາມາດໄດ້ຮັບການຄຸ້ມຄອງຫຼັງຈາກໄດ້ຮັບຂັ້ນຕອນການພິຈາລະນາປະກັນໄພຂອງບໍລິສັດ. ສຳລັບການຄຸ້ມຄອງຄູ່ສົມລົດແມ່ນຈະໄດ້ຍຸດຕິ ທີ່ອາຍຸ 66ປີ.
ໄລຍະເວລາຂອງສັນຍາ	1 ປີ, ຕໍ່ສັນຍາເປັນປີ.
ຜົນປະ�โຫຍດຂອງສັນຍາ	ວົງເງິນການປະກັນໄພຈຳນວນ 100% ຈະຖືກຈ່າຍໃນກໍລະນີທີ່ມີການເສຍຊີວິດ ຫຼື ການເສຍອົງຄະແບບສິ້ນເຊີງ ແລະ ຖາວອນເນື່ອງຈາກອຸປະຕິເຫດ.
ໄລຍະຂອງການຈ່າຍຄ່າທຳນຽມ	ລາຍປີ
ຜົນປະໂຫຍດເມື່ອຄົບອາຍຸສັນຍາ	ບໍ່ມີຜົນປະໂຫຍດເມື່ອຄົບອາຍຸສັນຍາ
ຜົນປະໂຫຍດເພີ່ມຕື່ມ	ຜົນປະໂຫຍດການຄຸ້ມຄອງແບບປະກັນໄພກຸ່ມຈາກການເສຍຊີວິດຈາກອຸປະຕິເຫດ ແລະ ພິການ. ຜົນປະໂຫຍດການຄຸ້ມຄອງແບບປະກັນໄພກຸ່ມຈາກການເຂົ້າໂຮງໝໍເນື່ອງຈາກອຸປະຕິເຫດ. ຂໍ້ມູນເພີ່ມຕື່ມທີ່ຜົນປະໂຫຍດຂອງຜົນປະໂຫຍດເພີ່ມຕື່ມ.
ພະນັກງານໃໝ່ - ພະນັກງານລາອອກ	ບໍລິສັດຈະຕ້ອງໄດ້ຈ່າຍເງິນຄ່າທຳນຽມປະກັນໄພ ຕ້ອງຈ່າຍເພີ່ມຕາມສັດສ່ວນໃນກໍລະນີທີ່ ພະນັກງານໃໝ່ໄດ້ເຂົ້າຮ່ວມ ສັນຍາການປະກັນໄພກຸ່ມຂອງບໍລິສັດ. ໃນກໍລະນີທີ່ພະນັກງານລາອອກ (ໂດຍທີ່ບໍ່ໄດ້ຮຽກຮ້ອງເອົາເງິນຄຸ້ມຄອງ ຫຼື ຜົນປະໂຫຍດເພີ່ມຕື່ມ) ເງິນປະກັນໄພຈະຖືກຈ່າຍຄືນຕາມສັດສ່ວນ.
ການຕໍ່ອາຍຸຄ່າທຳນຽມ	ບໍ່ມີການຮັບປະກັນ

ແພັກເກັດ ຜະລິດຕະພັນ ພຣູບິສິເນດສ์

ລະດັບການຄຸ້ມຄອງແມ່ນສາມາດຖືກກຳນົດໂດຍຕ້ອງການ ອີງຕາມມາດຕະຖານພາຍໃນຂອງບໍລິສັດ

ຜົນປະໂຫຍດຂອງ ຜະລິດຕະພັນ ພຣູບິສິເນດສ์

ຜະລິດຕະພັນ ພຣູບິສິເນດສ์ - ແຜນປະກັນໄພຊີວິດກຸ່ມຂັ້ນຕົ້ນ

ຜົນປະໂຫຍດຈາກການເສຍຊີວິດ (ປະກັນໄພຊີວິດແບບກຸ່ມ) ວົງເງິນການປະກັນໄພຈຳນວນ100%ຈະຖືກຈ່າຍໃນກໍລະນີທີ່ມີການເສຍຊີວິດຂອງສະມາຊິກ ຫຼື ຜູ້ຕິດຕາມ.

ການເສຍອົງຄະແບບສິ້ນເຊີງ ແລະ ຖາວອນ - ວົງເງິນການປະກັນໄພຈຳນວນ 100% ຈະຖືກຈ່າຍໃຫ້ ສະມາຊິກ ຫຼື ຜູ້ຕິດຕາມ ໃນກໍລະນີທີ່ມີການເສຍອົງຄະແບບສິ້ນເຊີງ ແລະ ຖາວອນ.

ຜົນປະໂຫຍດຈຳກັດຂອງ ປະກັນໄພຊີວິດແບບກຸ່ມ: ຫຼັງຈາກທີ່ມີການຈ່າຍວົງເງິນປະກັນໄພບໍ່ວ່າຈະເປັນກໍລະນີເສຍຊີວິດ ຫຼື ພິການຖາວອນ. ການຄຸ້ມຄອງ ແລະ ຜົນປະໂຫຍດພາຍໃຕ້ຜະລິດຕະພັນນີ້ຖືວ່າສິ້ນສຸດລົງ.

ພິການຖາວອນໝາຍເຖິງຜູ້ໄດ້ຮັບການປະກັນໄພຊີວິດ ຫຼື ຜູ້ຕິດຕາມໄດ້ຖືກກະທົບທາງຮ່າງກາຍເຮັດໃຫ້ເສຍອົງຄະ ຫຼື ບໍ່ສາມາດປິ່ນປົວໄດ້, ຫຼື ພິການຖາວອນເຊັ່ນ:

ສອງແຂນ, ຫຼື	ຕາທັງສອງຂ້າງ, ຫຼື
ສອງຂາ,ຫຼື	ຕາຂ້າງໜຶ່ງ ແລະ ແຂນຂ້າງໜຶ່ງ, ຫຼື
ແຂນໜຶ່ງ ແລະ ຂາໜຶ່ງ, ຫຼື	ຂາຂ້າງໜຶ່ງ ຫຼື ຕາຂ້າງໜຶ່ງ

ໃນຄວາມໝາຍເຫຼົ່ານີ້, ການເສຍອົງຄະແບບສິ້ນເຊີງ ຫຼື ການພິການຖາວອນໂດຍບໍ່ສາມາດປິ່ນປົວຫາຍຂາດໄດ້ແມ່ນ:

- ການຖືກກະທົບທາງສາຍຕາ ໝາຍເຖິງການຖືກກະທົບຈົນສົ່ງຜົນກະທົບໃຫ້ເສຍການເບິ່ງເຫັນ.
- ການເສຍແຂນໝາຍເຖິງ ການຖືກກະທົບຈົນສົ່ງຜົນກະທົບໃຫ້ເສຍອົງຄະຈົນເຖິງຂໍ້ມື.
- ການເສຍຂາໝາຍເຖິງ ການຖືກກະທົບຈົນສົ່ງຜົນກະທົບໃຫ້ເສຍອົງຄະຈົນເຖິງຂໍ້ຕີນ.

ໃນກໍລະນີທີ່ມີການເສຍອົງຄະ ຫຼື ພິການຖາວອນເຊິ່ງບໍ່ສາມາດປິ່ນປົວຫາຍຂາດໄດ້ຂອງ ແຂນ ຫຼື ຂາ ຫຼື ຕາ ຈະຕ້ອງມີການຢັ້ງຢືນພາຍໃນ 6 ເດືອນ ຫຼັງຈາກທີ່ມີເຫດອຸປະຕິເຫດຂຶ້ນ.

ໃນກໍລະນີທີ່ເປັນພິການຖາວອນ ຈະຕ້ອງໄດ້ຮັບການຢັ້ງຢືນຈາກໂຮງໝໍແຂວງ,ໂຮງໝໍນະຄອນຫຼວງ ຫຼືໂຮງໝໍສາກົນ ຫຼື ເອກະຊົນໃນກໍລະນີດັ່ງກ່າວເຊິ່ງບໍ່ເກີນ 3 ເດືອນ ແລະ ຊ້າສຸດບໍ່ໃຫ້ເກີນ 6 ເດືອນ ຫຼັງຈາກທີ່ມີເຫດອຸປະຕິເຫດຂຶ້ນ ຫຼື ຫຼັງຈາກທີ່ມີການເປັນພິການຖາວອນ.

ໃນກໍລະນີນີ້,ບໍລິສັດປະກັນໄພມີສິດທີ່ຈະໃຫ້ຜູ້ໄດ້ຮັບການປະກັນໄພຊີວິດ ຫຼື ຜູ້ຕິດຕາມນັ້ນກວດສຸຂະພາບໂດຍໂຮງໝໍທີ່ຂຶ້ນທະບຽນຕາມຕ້ອງການ.

ຜະລິດຕະພັນ ພຣູບິສິເນດສ์ - ຜົນປະໂຫຍດເພີ່ມຕື່ມຈາກການເສຍຊີວິດຈາກອຸປະຕິເຫດ ແລະ ພິການ

ຜົນປະໂຫຍດຈາກການເສຍຊີວິດຈາກອຸປະຕິເຫດ ແລະ ພິການ ຕາມສັດສ່ວນ - ວົງເງິນຈະຖືກຈ່າຍຖ້າຫາກว່າຜູ້ໄດ້ຮັບການປະກັນໄພຊີວິດ ຫຼື ຜູ້ຕິດຕາມເສຍຊີວິດຈາກອຸປະຕິເຫດ. ເປີເຊັນຂອງວົງເງິນປະກັນໄພ ຖ້າຫາກว່າຜູ້ໄດ້ຮັບການປະກັນໄພຊີວິດ ຫຼື ຜູ້ຕິດຕາມມີຜົນກະທົບຈາກຮ່າງກາຍຈາກອຸປະຕິເຫດ, ການເສຍຊີວິດຈາກອຸປະຕິເຫດ ຫຼື ການບາດເຈັບແມ່ນຕ້ອງເກີດຂຶ້ນພາຍໃນ 180 ວັນ ທີ່ມີເຫດການອຸປະຕິເຫດ.

ຜົນປະໂຫຍດຂອງ ພິການຖາວອນ ຈາກອຸປະຕິເຫດ - ວົງເງິນປະກັນໄພຈະຖືກຈ່າຍເທົ່າກັນກັບການເສຍຊີວິດຈາກອຸປະຕິເຫດ ຖ້າຫາກว່າຜູ້ໄດ້ຮັບການປະກັນໄພຊີວິດ ຫຼື ຜູ້ຕິດຕາມເປັນພິການຖາວອນເນື່ອງຈາກອຸປະຕິເຫດ. ການພິການຖາວອນຕ້ອງເກີດຂຶ້ນພາຍໃນ 180 ວັນ ຈາກວັນທີ່ເກີດອຸປະຕິເຫດ. ຄວາມໝາຍຂອງພິການຖາວອນແມ່ນຄືກັນກັບ ປະກັນໄພແບບກຸ່ມ.

ຜົນປະໂຫຍດຈຳກັດຈາກການເສຍຊີວິດຈາກອຸປະຕິເຫດ ແລະ ພິການ - ເງິນທົດແທນສູງສຸດຂອງຜູ້ໄດ້ຮັບການປະກັນໄພຊີວິດ ຫຼື ຜູ້ຕິດຕາມ ຫາກເສຍຊີວິດຈາກອຸປະຕິເຫດ ແລະ ພິການ ຕາມສັດສ່ວນ ແລະ ພິການຖາວອນ ຈາກອຸປະຕິເຫດແມ່ນຈຳກັດທີ່ 100 ເປີເຊັນຂອງວົງເງິນຕໍ່ປີ. ໃນກໍລະນີທີ່ວົງເງິນຮອດຂີດຈຳກັດແລ້ວ, ຜົນປະໂຫຍດຈະສິ້ນສຸດລົງ. ເຊິ່ງຈະສົ່ງຜົນກະທົບຕໍ່ການຈ່າຍຜົນປະໂຫຍດຕາມແຜນພື້ນຖານ ຫຼື ຜົນປະໂຫຍດອື່ນໆ.

ອຸປະຕິເຫດໝາຍເຖິງເຫດການທີ່ເກີດຂຶ້ນດ້ວຍຄວາມຮຸນແຮງ, ບໍ່ໄດ້ຕັ້ງໃຈ, ແລະ ເກີດພາຍນອກແຕ່ພຽງຜູ້ດຽວ ແລະ ໂດຍກົງ ເຊັ່ນວ່າ: ການເຈັບປ່ວຍ ຫຼື ພະຍາດຂອງຜູ້ໄດ້ຮັບການປະກັນໄພຊີວິດ ຫຼື ຜູ້ຕິດຕາມ.

ໃນກໍລະນີນີ້, ບໍລິສັດປະກັນໄພມີສິດທີ່ຈະໃຫ້ຜູ້ໄດ້ຮັບການປະກັນໄພຊີວິດ ຫຼື ຜູ້ຕິດຕາມນັ້ນກວດສຸຂະ ພາບໂດຍໂຮງໝໍທີ່ຂຶ້ນທະບຽນຕາມຕ້ອງການ.

ຜະລິດຕະພັນ ພຣູບິສິເນດສ์ - ຜົນປະໂຫຍດການຄຸ້ມຄອງຈາກການເຂົ້າໂຮງໝໍເນື່ອງຈາກອຸປະຕິເຫດ

ຜົນປະໂຫຍດການຄຸ້ມຄອງຈາກການເຂົ້າໂຮງໝໍເນື່ອງຈາກອຸປະຕິເຫດ - ວົງເງິນປະກັນໄພຈະຖືກຈ່າຍລາຍວັນໃຫ້ກັບຜູ້ໄດ້ຮັບການປະກັນໄພຊີວິດ ຫຼື ຜູ້ຕິດຕາມໃນກໍລະນີທີ່ໄດ້ເຂົ້າປິ່ນປົວທີ່ໂຮງໝໍເນື່ອງຈາກການເກີດອຸປະຕິເຫດ ສູງສຸດເຖິງ 30 ວັນ ຕໍ່ຄັ້ງທີ່ເກີດອຸປະຕິເຫດ, ເຊິ່ງຄຸ້ມຄອງສູງອຸປະຕິເຫດເຖິງ 5 ຄັ້ງ ຕໍ່ປີ. ການບາດເຈັບຕ້ອງເກີດພາຍໃນ 180 ວັນນັບ ຈາກວັນທີ່ເກີດອຸປະຕິເຫດ.

ການເຂົ້າປິ່ນປົວທີ່ໂຮງໝໍຄວນຖືວ່າເປັນຄວາມຈຳເປັນທາງການແພດ.

ຜົນປະໂຫຍດຂອງຜະລິດຕະພັນປະກັນໄພແບບກຸ່ມນີ້ສາມາດມອບໃຫ້ຄູ່ສົມລົດຂອງພະນັກງານ.

ຂໍແຈ້ງວ່າ: ຜົນປະໂຫຍດເພີ່ມຕື່ມອາດຈະມີຂໍ້ຍົກເວັ້ນບາງປະການເຊິ່ງທ່ານສາມາດອ່ານຂໍ້ມູນເພີ່ມຕື່ມໄດ້ທີ່ຂໍ້ກົດໝາຍ ແລະ ເງື່ອນໄຂຂອງຜະລິດຕະພັນນີ້.

ຜະລິດຕະພັນ ພຣູບີສິເນດສ໌

"ให้พวกเราดูแลคนที่ดูแลพะนักงานของท่าน"

ການປັບປຸງຄວາມພໍໃຈຂອງ ພະນັກງານເປັນສິ່ງສຳຄັນ ອັນດັບທຳອິດ

ຄວາມພໍໃຈຂອງພະນັກງານສາມາດຊ່ວຍໃຫ້ ເສດຖະກິດຂອງບໍລິສັດດີຂຶ້ນ ເຊິ່ງສະແດງ ໃຫ້ເຫັນວ່າ ຖ້າສະຖານທີ່ເຮັດວຽກມີສະພາບ ແວດລ້ອມທີ່ດີຈະຊ່ວຍໃຫ້ປະສິດຖິພາບການ ເຮັດວຽກສູງຂຶ້ນ

ໃນຖານະທີ່ເປັນບໍລິສັດ, ພະນັກງານເປັນ ຊັບພະຍາກອນທີ່ສຳຄັນທີ່ສຸດ ເນື່ອງຈາກ ວ່າພວກເຂົາເປັນກະດູກສັນຫຼັງຂອງບໍລິ ສັດ ແລະ ເປັນຕົວແທນຂອງບໍລິສັດ

ກ່ຽວກັບພວກເຮົາ

ບໍລິສັດ ພຣູເດັນໂຊລ໌ ຖືກສ້າງຕັ້ງ ຂຶ້ນທີ່ເມືອງລອນດອນ ໃນປີ 1848 ເຊິ່ງມີອາຍຸຫຼາຍກວ່າ 174 ປີ ແລະ ພວກເຮົາເປັນໜຶ່ງໃນບໍລິສັດປະກັນ ໄພທີ່ມີປະຫວັດສາດຍາວນານທີ່ສຸດ.

ບໍລິສັດ ພຣູເດັນໂຊລ໌ ດຳເນີນທຸລະ ກິດໃນ 15 ປະເທດໃນອາຊີ ແລະໄດ້ ຮັບການໄວ້ວາງໃຈຈາກລູກຄ້າຫຼາຍ 17 ລ້ານຄົນໃນພາກພື້ນ.

ບໍລິສັດ ພຣູເດັນໂຊລ໌ ມີສຳນັກງານ ໃຫຍ່ທີ່ລອນດອນ ປະເທດອັງກິດ ແລະ ຮົງກົງ ແລະ ຖືກຈົດ ທະບຽນ ເຂົ້າຕະຫຼາດຫຼັກຊັບຢູ່ທີ່ລອນດອນ ແລະ ຮົງກົງ.

ພຣູເດັນໂຊລ໌ ຄໍອອບໂປເຣເຊີນ ເອເຊຍ ເປັນເຈົ້າຂອງ ພຣູເດັນໂຊລ໌ ລາວ ແຕ່ພຽງຜູ້ດຽວ. ພວກເຮົາໄດ້ເປີດຫ້ອງການ ຕົວແທນຂອງພວກເຮົາທີ່ ນະຄອນຫຼວງວຽງຈັນໃນ ປີ 2015 ແລະ ໄດ້ຮັບໃບອະນຸຍາດການດຳເນີນທຸລະກິດຈາກ ກະຊວງການເງິນໃນເດືອນເມສາ 2016. ພວກເຮົາໄດ້ນຳເອົາຜະລິດຕະພັນປະກັນໄພຊີວິດທີ່ແທດເໝາະກັບຄວາມ ຕ້ອງການໃນການຄຸ້ມຄອງ ແລະ ການສະສົມທຶນທາງການເງິນສຳລັບຄົນລາວ. ໃນປະຈຸບັນ, ບໍລິສັດ ພຣູເດັນໂຊລ໌ ລາວ ໄດ້ຈຳໜ່າຍຜະລິດຕະພັນ ແລະ ການບໍລິການຜ່ານເຄືອຂ່າຍທະນາຄານຄູ່ຮ່ວມທຸລະກິດທີ່ມີຊື່ສຽງທົ່ວປະເທດ, ຜ່ານ ລະບົບຂາຍກົງ, ລວມໄປເຖິງການຈຳໜ່າຍຜະລິດຕະພັນຜ່ານເທິງ ແອບພິເຄເຊີນເພົ້າສ໌ ອີກດ້ວຍ.

ຄຳຖາມທີ່ຖືກຖາມປະຈຳ:

ຖ ໃຜທີ່ສາມາດຊື້ ຜະລິດຕະພັນ ພຣູບີສິເນດສ໌?

ຕ ພະນັກງານທຸກຄົນ, ຜູ້ບໍລິຫານ, ຄູ່ຮ່ວມທຸລະກິດ, ເຈົ້າຂອງທຸລະກິດ, ແລະ ຜູ້ປະກອບການປະຈຳທີ່ເຮັດວຽກເພື່ອ ຮັບຜົນຕອບແທນ ຫຼື ຜົນກຳໄລພາຍໃຕ້ສັນຍາພະນັກງານສາມາດຊື້ຜະລິດຕະພັນນີ້ໄດ້. ສຳລັບພະນັກງານຕ່າງ ປະເທດ (ຜູ້ທີ່ມີໃບອະນຸຍາດການເຮັດວຽກທີ່ປະເທດລາວ) ສາມາດຊື້ຜະລິດຕະພັນໄດ້ເຊັ່ນກັນ.

ຖ ສະມາຊິກຂອງຜະລິດຕະພັນນີ້ຕ້ອງໄດ້ກວດສຸຂະພາບບໍ?

ຕ ສະມາຊິກບໍ່ຈຳເປັນຕ້ອງໄດ້ຮັບການກວດສຸຂະພາບສຳລັບຄວາມຄຸ້ມຄອງຈົນເຖິງຄວາມຄຸ້ມຄອງຟຣີຈຳກັດ. ວົງ ເງິນຄຸ້ມຄອງຟຣີນັ້ນແມ່ນອີງຕາມວົງເງິນປະກັນໄພຂອງການຊື້ປະກັນໄພແບບກຸ່ມ. ສຳລັບສັນຍາການປະກັນໄພ ທີ່ມີສະມາຊິກໜ້ອຍກວ່າ 10 ຄົນ, ສະມາຊິກນັ້ນຕ້ອງໄດ້ຕອບແບບສອບຖາມໃນການກວດສຸຂະພາບ.

ຖ ພະນັກງານທີ່ເຂົ້າເຮັດວຽກລະຫວ່າງສັນຍາການປະກັນໄພນັ້ນຈະຖືກຄຸ້ມຄອງບໍ?

ຕ ແມ່ນແລ້ວ, ພະນັກງານທີ່ເຂົ້າເຮັດວຽກໃນລະຫວ່າງສັນຍາການປະກັນໄພ ຈະຖືກຄຸ້ມຄອງພາຍໃຕ້ສັນຍາ. ບໍລິ ສັດຈະຕ້ອງໄດ້ຈ່ຍເງິນຄ່າທຳນຽມປະກັນໄພ ຕາມສັດສ່ວນທີ່ພະນັກງານນັ້ນເຂົ້າເຮັດວຽກທີ່ບໍລິສັດ. ໃນກໍລະນີ ທີ່ພະນັກງານລາອອກ (ໂດຍທີ່ບໍ່ໄດ້ຮຽກຮ້ອງເອົາເງິນຄຸ້ມຄອງ ຫຼື ຜົນປະ�โຫຍດເພີ່ມຕື່ມ) ບໍລິສັດ ພຣູເດັນ ໂຊລ໌ ຈະຄືນເງິນທີ່ບໍລິສັດໄດ້ຈ່ຍຕາມສັດສ່ວນ.

ຖ ໃຜຈະໄດ້ຮັບເງິນທົດແທນປະກັນໄພ?

ຕ ໃນກໍລະນີທີ່ມີການຮຽກຮ້ອງເງິນທົດແທນປະກັນໄພ ເງິນຈະຖືກຈ່ຍໃຫ້ກັບຜູ້ຮັບຜົນປະ�โຫຍດທີ່ພະນັກງານໄດ້ ລະບຸໄວ້ໃນສັນຍາ.

ຖ ຂ້າພະເຈົ້າຍົກເລີກສັນຍາການປະກັນໄພໄດ້ບໍ?

ຕ ໄດ້,ທ່ານສາມາດຍົກເລີກສັນຍາການປະກັນໄພໄດ້. ໃນກໍລະນີທີ່ບໍ່ມີການຮຽກຮ້ອງເງິນທົດແທນປະກັນໄພ (ທີ່ອີງຕາມສັນຍາການປະກັນໄພ ຫຼື ຜົນປະโຫຍດ. ພວກເຮົາຈະຄືນຄ່າທຳທຳນຽມຕາມສັດສ່ວນ.)

“ ປົກປ້ອງ ແລະ ຄຸ້ມຄອງພະນັກງານຂອງທ່ານ ດ້ວຍຜະລິດຕະພັນປະກັນໄພຈາກພຣູເດັນໂຊລ໌ ”

ສອບຖາມຂໍ້ມູນເພີ່ມຕື່ມ: https://www.prudential.la/ 021-211 123 Prudential Laos